ສຳນັກງານໃຫຍ່

ເລກທີ: 030 /ທຄຕລ..ສພຫ.....
ນະຄອນຫຼວງວຽງຈັນ, ວັນທີ:..10 ກໍລະກົດ 2024...

ມະຕິ
ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
ຄັ້ງທີ 02 ປະຈຳປີ 2024, ວັນທີ 10/07/2024

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 2 ປະຈຳປີ 2024 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:30 – 12:00 ໂມງ ຂອງວັນທີ 10 ກໍລະກົດ 2024 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ອັນມະຈິດ ປະທານສະພາບໍລິຫານ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມ 08 ທ່ານ, ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ.

ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1. ຮັບຊາບລາຍງານການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ 06 ເດືອນ 2024;
2. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ລາຍງານຄວາມຄືບໜ້າຂອງໂຄງການ ບາເຊີ 2 ປະຈຳໄຕມາດ 2/2024;
3. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາພາຍໃນ ປະຈຳໄຕມາດ 02/2024;
4. ຮັບຮອງການປ່ຽນແປງເງື່ອນໄຂສັນຍາເງິນກູ້ຂອງລູກຄ້າບໍລິສັດ 02 ລາຍການ;
5. ຮັບຮອງການສະເໜີກູ້ຢືມເງິນຂອງລູກຄ້າບໍລິສັດ 01 ລາຍການ.

ປະທານສະພາບໍລິຫານ

ບຸນປອນ ອັນມະຈິດ